ບົດສະຫຼຸບດ້ານນະໂຍບາຍໂດຍສັງເຂບ

ຄ່າໃຊ້ຈ່າຍຂອງການຂາດສານອາຫານໃນ ສປປ ລາວ

ສປປ ລາວ ມີຄວາມຄືບໜ້າທີ່ໂດດເດັ່ນໃນການແກ້ໄຂບັນຫາການຂາດສານອາຫານ,ໂດຍອັດຕາພາວະການຂາດສານອາຫານແບບຊໍ້າເຮື້ອ (Stunting) ຫຼຸດລົງຈາກ 47.5% ໃນປີ 2000 ມາເປັນ 33% ໃນປີ 2023 ແລະ ພາວະຈ່ອຍຜອມຈາກ 18% ມາເປັນ 11% (ຮູບທີ 1). ເຖິງຢ່າງໃດກໍ່ຕາມ, ສປປ ລາວ ຍັງສືບຕໍ່ມີອັດຕາການຂາດສານອາຫານຂອງເດັກທີ່ສູງທີ່ສຸດແຫ່ງໜຶ່ງ ໃນພາກພື້ນອາຊີຕາເວັນອອກສຽງໃຕ້. ໃນເວລາດຽວກັນ, ພາວະນ້ຳໜັກເກີນ ແລະ ພາວະໂລກອ້ວນໃນຜູ້ໃຫຍ່ ເຫັນວ່າມີແນວໂນ້ມ ທີ່ເພີ່ມຂຶ້ນ ໂດຍຄາດຄະເນວ່າປະມານ 28.5% ຂອງຜູ້ຊາຍ ແລະ 35.8% ຂອງແມ່ຍິງມີນ້ຳໜັກເກີນ ຫຼື ພາວະຕຸ້ຍໃນປີ 2022. ສິ່ງນີ້ສະທ້ອນໃຫ້ເຫັນເຖິງພາລະແບກຫາບສອງດ້ານຂອງການຂາດສານອາຫານທີ່ກຳລັງເກີດຂຶ້ນ.

ການຂາດສານອາຫານຂອງເດັກ ກຳລັງເຮັດໃຫ້ ສປປ ລາວ ເສຍຫາຍຫຼາຍກວ່າການເຕີບໂຕຫາງເສດຖະກິດປະຈຳປີ

13.8 ພັນຕື້ກີບ (735 ລ້ານໂດລາສະຫະລັດ)

ຄ່າໃຊ້ຈ່າຍທັງໝົດຂອງການຂາດສານອາຫານຂອງເດັກທີ່ເກີດຂຶ້ນໃນປີ 2023

5.2% ຂອງຜະລິດຕະພັນລວມພາຍໃນ (GDP)

ຄ່າໃຊ້ຈ່າຍຂອງການຂາດສານອາຫານຂອງເດັກຫຼາຍກວ່າການເຕີບໂຕຂອງ GDP 4.2% ໃນປີ 2023

943 ຕື້ກີບ (50.4 ລ້ານໂດລາສະຫະລັດ)

ການສູນເສຍໃນຕະຫຼອດຊ່ວງຊີວິດໃນອະນາຄົດຕໍ່ປີສຳລັບເດັກອາຍຸຕ່ຳກວ່າ 5 ປີທີ່ໄດ້ຮັບຜົນກະທົບຈາກການຂາດສານອາຫານໃນປະຈຸບັນ.

ເພີ່ມຮູບທີ 1: ແນວໂນ້ມການຂາດສານອາຫານຂອງເດັກໃນ ສປປ ລາວ, ປີ 2000-2023



ການສຶກສາຄ່າໃຊ້ຈ່າຍຂອງການຂາດສານອາຫານ ໃຊ້ຮູບແບບທາງເສດຖະກິດເພື່ອປະເມີນຕົ້ນທຶນຄວາມເສຍຫາຍ ຂອງການຂາດສານອາຫານຂອງເດັກໃນສາມຂົງເຂດຄື: ດ້ານສາທາ, ການສຶກສາ ແລະ ປະສິດທິພາບການເຮັດວຽກ. ການສຶກສາໃນຄັ້ງນີ້ຄອບຄຸມທັງຕົ້ນທຶນທີ່ເກີດຂຶ້ນໃນປະຈຸບັນອັນເນື່ອງມາຈາກພາວະການຂາດສານອາຫານໃນອະດີດ (ຕົ້ນທຶນໃນອະດີດ) ແລະ ຕົ້ນທຶນທີ່ຄາດວ່າຈະເກີດຂຶ້ນໃນອະນາຄົດອັນເນື່ອງມາຈາກການຂາດສານອາຫານໃນເດັກໃນປະຈຸບັນ (ຕົ້ນທຶນທີ່ຄາດຄະເນ).

ການຂາດສານອາຫານສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງຕໍ່ສັງຄົມ ແລະ ເສດຖະກິດ

ການຂາດສານອາຫານສົ່ງຜົນກະທົບຕໍ່ການພັດທະນາຊັບພະຍາກອນມະນຸດ ແລະ ການເຕີບໂຕທາງເສດຖະກິດໂດຍ:

- ອັດຕາການເຈັບເປັນທີ່ເພີ່ມຂຶ້ນໄດ້ສ້າງແຮງກົດດັນດ້ານການໃຊ້ຈ່າຍເພີ່ມຂຶ້ນຕໍ່ລະບົບສາທາລະນະສຸກ.
- ສົ່ງຜົນກະທົບຕໍ່ການພັດທະນາສະໝອງ, ນຳໄປສູ່ຜົນກະທົບຕະຫຼອດຊີວິດຕໍ່ການຮັບຮູ້ ແລະ ການຮຽນຮູ້.
- ອັດຕາການເສຍຊີວິດເພີ່ມຂຶ້ນ ແລະ ການຫຼຸດລົງຂອງກຳລັງແຮງງານໃນອະນາຄົດ.
- ການຫຼຸດລົງຂອງຄວາມສາມາດທາງດ້ານຮ່າງກາຍ ແລະ ຄວາມສາມາດໃນການເຮັດທີ່ມີປະສິດທິພາບ ໄດ້ສົ່ງຜົນກະທົບຕໍ່ຜະລິດຕະພາບຂອງແຮງງານ.
- ການເພີ່ມຂຶ້ນຂອງກຸ່ມທີ່ມີຄວາມສ່ຽງເຮັດໃຫ້ຄົນຢູ່ໃນວົງຈອນຄວາມທຸກຍາກ ແລະ ຄວາມດ້ອຍພັດທະນາຢ່າງຕໍ່ເນື່ອງ



ຄ່າໃຊ້ຈ່າຍທາງເສດຖະກິດໃນປີ 2023 ທີ່ເກີດຈາກການຂາດສານອາຫານໃນອະດີດ ແລະ ປັດຈຸບັນ

ສາທາລະນະສຸກ

- ມີອັດຕາການເຈັບປ່ວຍເພີ່ມຂຶ້ນ **31,722** ຄັ້ງ ຍ້ອນບັນຫາສະພາບສຸຂະພາບທີ່ກ່ຽວຂ້ອງກັບການຂາດສານອາຫານ.
- ຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນ **92.7** ຕື້ກີບ (**4.95** ລ້ານໂດລາສະຫະລັດ) ແມ່ນຄ່າໃຊ້ຈ່າຍດ້ານສາທາລະນະສຸກ ເຊິ່ງທຽບເທົ່າກັບ **3.5%** ຂອງລາຍຈ່າຍດ້ານສາທາລະນະສຸກທັງໝົດ.
- ການເສຍຊີວິດຂອງເດັກຈຳນວນ **366,631** ຄົນ ແມ່ນກ່ຽວຂ້ອງກັບການຂາດສານອາຫານຕາມການເວລາ.

ການສຶກສາ

- ມີການຮຽນຊ້ຳຊັ້ນຮຽນຫຼາຍກວ່າ **10,000** ຄັ້ງ ທີ່ກ່ຽວຂ້ອງກັບການຂາດສານອາຫານແບບຊ້ຳເຮື້ອໃນໄວເດັກ.
- ຄ່າໃຊ້ຈ່າຍໃນການສຶກສາເພີ່ມຂຶ້ນ **34.3** ຕື້ກີບ (**1.8** ລ້ານໂດລາສະຫະລັດ), ເທົ່າກັບ **1.05%** ຂອງລາຍຈ່າຍດ້ານການສຶກສາທັງໝົດ.
- ການສູນເສຍເວລາຮຽນໂດຍສະເລ່ຍ 2.18 ປີ ເນື່ອງຈາກການອອກໂຮງຮຽນທີ່ມີຜົນມາຈາກການຂາດສານອາຫານແບບຊ້ຳເຮື້ອ.

ຜະລິດຕະພາບ

- ມູນຄ່າ **13.6** ພັນຕື້ກີບ (**728** ລ້ານໂດລາສະຫະລັດ) ແມ່ນການສູນເສຍທີ່ເກີດຈາກປະສິດທິພາບການເຮັດວຽກຕ່ຳລົງ ແລະ ລາຍຮັບທີ່ຫຼຸດລົງຈາກການວຽກງານທີ່ເຮັດດ້ວຍກຳລັງ ແລະ ດ້ວຍທັກສະມັນສະໝອງຕ່ຳລົງ, ພ້ອມທັງກຳລັງແຮງງານທີ່ຫຼຸດລົງຍ້ອນການເສຍຊີວິດກ່ອນໄວອັນຄວນ.

ຕົ້ນທຶນຂອງການຂາດສານອາຫານໃນເດັກ, ແຍກຕາມມິຕິຜົນກະທົບ

ມິຕິຜົນກະທົບ	ຕົ້ນທຶນທັງໝົດ (ຕື້ກີບ)	ຕົ້ນທຶນທັງໝົດ (ລ້ານໂດລາສະຫະລັດ)
ຕົ້ນທຶນດ້ານສາທາລະນະສຸກທີ່ສູງຂຶ້ນ	92.7	5
ຕົ້ນທຶນດ້ານການສຶກສາທີ່ສູງຂຶ້ນ	34.3	1.8
ສູນເສຍປະສິດທິ ພາບໃນການເຮັດວຽກ ແລະ ລາຍໄດ້	13,633	728.3
ທັງໝົດ	**13,760**	**735.1**

ການຂາດສານອາຫານໃນມື້ນີ້ສ້າງຄວາມເສຍຫາຍທາງເສດຖະກິດໃນອະນາຄົດຢ່າງມະຫາສານ

- ພາວະການຂາດສານອາຫານໃນປະຈຸບັນຂອງເດັກນ້ອຍທີ່ອາຍຸຕ່ຳກວ່າ 5 ປີ ຄາດຄະເນວ່າຈະສ້າງຄວາມເສຍຫາຍຕະຫຼອດຊ່ວງອາຍຸຂອງພວກເຂົາ ເພີ່ມຂຶ້ນອີກ 24,798 ຕື້ກີບ (1.3 ຕື້ໂດລາສະຫະລັດ) ເຊິ່ງຕົວເລກນີ້ທຽບກັບຕົ້ນທຶນຄວາມເສຍຫາຍ ລາຍປີຢູ່ທີ່ 943 ຕື້ກີບ (50.4 ໂດລາສະຫະລັດ) ຕະຫຼອດຊ່ວງຊີວິດຂອງເຂົາເຈົ້າ.

ໝາຍເຫດ: ຕົ້ນທຶນຄວາມເສຍຫາຍຂອງການຂາດສານອາຫານຍັງປະກອບມີຄ່າໃຊ້ຈ່າຍດ້ານສາທາລະນະສຸກ ແລະ ການສູນເສຍປະສິດທິພາບໃນການເຮັດວຽກເພີ່ມເຕີມທີ່ເກີດຈາກພາວະນ້ຳໜັກເກີນ ແລະ ພາວະໂລກອ້ວນຂອງຜູ້ໃຫຍ່. ຄ່າໃຊ້ຈ່າຍເຫຼົ່ານີ້ບໍ່ສາມາດປະເມີນໄດ້ ເນື່ອງຈາກຂໍ້ມູນຄ່າໃຊ້ຈ່າຍດ້ານສາທາລະນະສຸກໃນລະດັບທີ່ຈຳແນກລາຍລະອຽດຍັງບໍ່ມີໃນປະຈຸບັນ.

ການຮຽກຮ້ອງໃຫ້ມີແນວທາງແກ້ໄຂຢ່າງຮີບດ່ວນ

ພາວະການຂາດສານອາຫານເຮັດໃຫ້ເກີດຕົ້ນທຶນຄວາມເສຍຫາຍຢ່າງໃຫຍ່ຫຼວງ ແຕ່ສາມາດຫຼີກລ່ຽງ ແລະ ສາມາດຫຼຸດຜ່ອນໄດ້ ຖ້າຫາກມີການດຳເນີນການຢ່າງທັນການ ແລະ ມີປະສິດທິພາບ. ສປປ ລາວ ກຳລັງຈະເລີ່ມຕົ້ນປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 10, ຍຸດທະສາດແຫ່ງຊາດດ້ານໂພຊະນາການ 2026-2035, ແລະ ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ 2026-2030, ເຊິ່ງສິ່ງເຫຼົ່ານີ້ຖືເປັນໂອກາດທີ່ສຳຄັນໃນການເລັ່ງລັດການຈັດຕັ້ງປະຕິບັດງານ.

©WFP/Vilakhone Sipaseuth

ໃຫ້ຖືເອົາການໃຊ້ຈ່າຍດ້ານໂພຊະນາການເປັນການລົງທຶນ, ບໍ່ແມ່ນຄ່າໃຊ້ຈ່າຍ

ການໃຊ້ຈ່າຍດ້ານໂພຊະນາການແມ່ນການລົງທຶນໄລຍະຍາວໃນຊັບພະຍາກອນມະນຸດ ແລະ ການເກັບໂຕທາງເສດຖະກິດໃນອະນາຄົດ, ແທນທີ່ຈະເປັນພາລະຄ່າໃຊ້ຈ່າຍຕໍ່ງົບປະມານຂອງລັດຖະບານ. ການສູນເສຍທາງເສດຖະກິດທີ່ເກີດຈາກການຂາດສານອາຫານນັ້ນມີມູນຄ່າຢ່າງມະຫາສານ ແລະ ສູງກວ່າມູນຄ່າຊັບພະຍາກອນທີ່ພວກເຮົາລົງທຶນໃນປະຈຸບັນເພື່ອປ້ອງກັນບັນຫາດັ່ງກ່າວ.

ສ້າງກໍລະນີການລົງທຶນດ້ານໂພຊະນາການເພື່ອລະດົມທຶນ

ນຳໃຊ້ຜົນການຄົ້ນພົບຈາກການສຶກສານີ້ຄຽງຄູ່ກັບການຕິດຕາມງົບປະມານ ແລະ ລາຍຈ່າຍດ້ານໂພຊະນາການ ແລະ ການວິເຄາະຕົ້ນທຶນທີ່ກຳລັງດຳເນີນຢູ່ຢ່າງຕໍ່ເນື່ອງ ເພື່ອສ້າງກໍລະນີສຳລັບການເພີ່ມການລົງທຶນໃສ່ວຽກງານດ້ານໂພຊະນາການ. ການຈັດສັນຊັບພະຍາກອນຄວນໄດ້ຮັບການຊີ້ນຳໂດຍວິທີການທີ່ອີງໃສ່ຂໍ້ມູນຫຼັກຖານເປັນຫຼັກ ເພື່ອຈັດລຳດັບຄວາມສຳຄັນຂອງມາດຕະການຈັດຕັ້ງປະຕິບັດວຽກງານດ້ານໂພຊະນາການໃຫ້ສາມາດບັນລຸເປົ້າໝາຍໄດ້.

ເສີມສ້າງການຈັດຕັ້ງປະຕິບັດຫຼາຍຂະແໜງການ

ວຽກງານໂພຊະນາການບໍ່ແມ່ນພຽງແຕ່ເປັນບັນຫາຂອງຂະແໜງສາທາລະນະສຸກເທົ່ານັ້ນ ແຕ່ຫາກວ່າຄ່າໃຊ້ຈ່າຍທີ່ເສຍຫາຍທີ່ໃຫຍ່ທີ່ສຸດ ຕົກຢູ່ພາຍໃຕ້ຄວາມເສຍຫາຍດ້ານ ເຊັ່ນ ການສູນເສຍລາຍຮັບ ອັນເນື່ອງມາຈາກການສູນເສຍປະສິດທິພາບການເຮັດວຽກ. ດັ່ງນັ້ນ, ຈຶ່ງຕ້ອງໄດ້ມີການເພີ່ມການລົງທຶນ, ດ້ານການເງິນ ແລະ ການຈັດຕັ້ງປະຕິບັດໃນດ້ານວຽກງານໂພຊະນາການໃຫ້ມີການປະສານງານກັນຢ່າງເປັນລະບົບໃນທົ່ວຂະແໜງການທີ່ກ່ຽວຂ້ອງ ເຊັ່ນ ສຶກສາ, ກະສິກຳ, ແຮງງານ ແລະ ສະຫວັດດີການສັງຄົມ, ອຸດສາຫະກຳ ແລະ ການຄ້າ ແລະ ການເງິນ, ຕາມທີ່ໄດ້ກຳນົດໄວ້ໃນຍຸດທະສາດການຮ່ວມງານຫຼາຍຂະແໜງການຂອງ ຍຸດທະສາດແຫ່ງຊາດດ້ານໂພຊະນາການ.

ຮັບມືກັບພາລະແບກຫາບສອງດ້ານຂອງການຂາດສານອາຫານ

ໃນຂະນະທີ່ພາວະການຂາດສານອາຫານຍັງຄົງເປັນສິ່ງທ້າທາຍອັນໃຫຍ່ຫຼວງ ແຕ່ການເພີ່ມຂຶ້ນຂອງພາວະນ້ຳໜັກເກີນ ແລະ ພາວະໂລກອ້ວນຈະສ້າງມູນຄ່າຄວາມເສຍຫາຍດ້ານສາທາລະນະສຸກ ແລະ ເສດຖະກິດເພີ່ມຂຶ້ນອີກ. ໂຄງການ ແລະ ນະໂຍບາຍຕ່າງໆທີ່ສົ່ງເສີມອາຫານທີ່ມີຄຸນຄ່າທາງໂພຊະນາການ ແລະ ມີຄວາມຫຼາກຫຼາຍສາມາດແກ້ໄຂບັນຫາພາວະການຂາດສານອາຫານໄປພ້ອມໆກັນ ແລະ ປ້ອງກັນພາວະນ້ຳໜັກເກີນ ແລະ ພາວະໂລກອ້ວນໄດ້.

ເສີມສ້າງລະບົບຂໍ້ມູນສຳລັບການຕັດສິນໃຈໂດຍອີງໃສ່ຫຼັກຖານ

ແກ້ໄຂຊ່ອງຫວ່າງໃນການເກັບກຳ, ຄຸນນະພາບ ແລະ ການຈຳແນກລາຍຈ່າຍດ້ານສາທາລະນະສຸກ ເພື່ອຮອງຮັບການສຶກສາຄ່າໃຊ້ຈ່າຍ ແລະ ການວິເຄາະການລົງທຶນດ້ານໂພຊະນາການໃນອະນາຄົດ.

ເງິນທຸກກີບທີ່ລົງທຶນໃນວຽກງານໂພຊະນາການ ຈະຊ່ວຍຫຼີກລ່ຽງຄວາມສູນເສຍອັນມະຫາສານຕໍ່ການພັດທະນາຊັບພະຍາກອນມະນຸດ ແລະ ເສດຖະກິດໃນອະນາຄົດ

ແຫຼ່ງຂໍ້ມູນ

ບົດສະຫຼຸບຫຍໍ້ດ້ານນະໂຍບາຍນີ້ ໄດ້ສະຫຼຸບເນື້ອໃນຕົ້ນຕໍຂອງການສຶກສາ ຄ່າໃຊ້ຈ່າຍຂອງການຂາດສານອາຫານໃນ ສປປ ລາວ (ມິຖຸນາ 2026) ໂດຍ ສູນໂພຊະນາການ, ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງ ສາທາລະນະສຸກ, ໂດຍໄດ້ຮັບການສະໜັບສະໜູນດ້ານວິຊາການຈາກ ອົງການອາຫານໂລກ (WFP) ແລະ ມະຫາວິທະຍາໄລ ມະຮິດົນ (Mahidol University). ການສຶກສານີ້ ໄດ້ນຳໃຊ້ກອບແນວຄິດການ ວິເຄາະຂອງ ຕົ້ນທຶນຄວາມສູນເສຍຈາກຄວາມອຶດຫິວ/ຕົ້ນທຶນຄວາມສູນ ເສຍຈາກພາລະແບກຫາບສອງເທົ່າຂອງການຂາດສານອາຫານຂອງ ຄະນະກຳມາທິການດ້ານເສດຖະກິດສຳລັບອາເມຣິກາລາຕິນ ແລະ ຄາຣິ ບຽນ (ECLAC) ແລະ ອົງການອາຫານໂລກ (WFP) ເຊິ່ງໄດ້ຖືກນຳໃຊ້ໃນ ຫຼາຍກວ່າ 25 ປະເທດ. ສຳລັບຜົນການສຶກສາຄົບຖ້ວນ, ແຫຼ່ງຂໍ້ມູນ ແລະ ວິທີວິໄຈ ແມ່ນສາມາດເບິ່ງຕື່ມໄດ້ໃນບົດລາຍງານສະບັບເຕັມ.

ບົດລາຍງານສະບັບ
ເຕັມສະແກນທີ່ນີ້:

World Food Programme

Mahidol University
Institute of Nutrition